ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ນະຄອນຫຼວງວຽງຈັນ, ວັນທີ 11 MAY 2018

ບົດລາຍງານ ຕິດຕາມຊຸກຍູ້ ກ່ຽວກັບການໂຄສະນາພົນຮ້າຍຂອງ ລບຕ,
ການສ້າງແຜນບູລິມະສິດ ແລະ ໂຄງຮ່າງການຈັດຕັ້ງ ຂອງ ຄຊກລ, ທີ່ ແຂວງເຊກອງ ແລະ ອັດຕະປື
ວັນທີ 29/4/2018-4/5/2018.

ອີງຕາມສະພາບຄວາມເປັນຈິງ ແລະ ຄວາມຈຳເປັນຂອງໜ້າວຽກ ໃນການຊຸກຍູ້ການຈັດຕັ້ງປະຕິບັດວຽກງານການແກ້ໄຂບັນຫາ ລບຕ ໃນ ສປປ ລາວ ສະນັ້ນ ໃນນາມ ຄຊກລ ເປັນຜູ້ຄຸ້ມຄອງມະຫາພາກ ຈຶ່ງໄດ້ລົງຕິດຕາມ ເພື່ອສຶກສາຄວາມຄືບໜ້າຂອງການປະຕິບັດວຽກງານ ແລະ ຊ່ວຍໃນການແກ້ໄຂບັນຫາທີ່ຮີບດ່ວນ ເພື່ອໃຫ້ກິດຈະກຳດຳເນີນໄປຕາມໝາກຜົນທີ່ວາງໄວ້.

- <u>ຈຸດປະສົງ:</u> ການລົງຕິດຕາມຊຸກຍູ້ແມ່ນເພື່ອ ຕິດຕາມຊຸກຍູ້ ກ່ຽວກັບການໂຄສະນາພົນຮ້າຍຂອງ ລບຕ, ການສ້າງແຜນບູລິມະສິດ ແລະ ໂຄງຮ່າງການຈັດຕັ້ງ ຂອງ ຄຊກລ ໃນຂັ້ນແຂວງ ໃຫ້ມີຄວາມເປັນເອກະພາບ, ມີຄວາມສອດຄ່ອງ ແທດເໝາະຕາມແນວທາງນະໂຍບາຍ ແລະຮັບປະກັນຄຸນນະພາບຂອງກິດຈະກຳ.

- <u>ຜູ້ເຂົ້າຮ່ວມ:</u>
  1. ທ່ານ ບຸນພະນິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ.
  2. ທ່ານ ນາງ ສີສະຫວັນ ຄຳມຸງຄຸນ ຫົວໜ້າໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ.
  3. ທ່ານ ໄມຕີ ແກ້ວວົງສາ ພະນັກງານຂັບລົດ.

- <u>ເນື້ອໃນ:</u>

ໃນການລົງຕິດຕາມ ໃນຄັ້ງນີ້ ແມ່ນໄດ້ເຂົ້າພົບ ແລະ ປຶກສາຫາລືກັບ ທ່ານຮອງເຈົ້າແຂວງ, ທ່ານຫົວໜ້າ, ທ່ານຮອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງເຊກອງ, ທ່ານຫົວໜ້າ, ທ່ານຮອງຫົວໜ້າໂຄງການເກັບກູ້ລະເບີດແຫ່ງຊາດ ແຂວງເຊກອງ ເຊິ່ງໃນການປຶກສາຫາລືແມ່ນເນັ້ນໃສ່:

1 ວິກິດການທາງການເງິນຂອງ ໂຄງການ ເກັບກູ້ລະເບີດແຫ່ງຊາດ ແຂວງເຊກອງ ເຊິ່ງສາເຫດແມ່ນມາຈາກປະສິດທິພາບ ປະສິດຜົນຂອງວຽກຍັງຂ້ອນຂ້າງຕ່ຳ, ການນຳໃຊ້ພາຫະນະ ການບັນທຶກກໍ່ຍັງບໍ່ລະອຽດເຊັ່ນປຶ້ມລ໊ອກບຸກ ຕໍ່ບັນຫານີ້ ທ່ານຮອງເຈົ້າແຂວງໄດ້ໃຫ້ທິດຊີ້ນຳວ່າ ຄວນມີການປະເມີນ ຖ້າຜົນອອກມາແນວໃດ ອາດມີການພິຈາລະນາຄືນໃໝ່ກ່ຽວກັບບຸກຄະລາກອນ ກໍ່ຄືການນຳຂອງໂຄງການເກັບກູ້ລະເບີດແຫ່ງຊາດ ແຂວງເຊກອງ.

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

2 ລະບອບການເຮັດວຽກຄວນເປັນໄປຕາມລະບອບປະຊາທິປະໄຕ ບໍ່ຄວນນໍາໃຊ້ລະບົບອາດຍາສິດ.

3 ຄວນມີການສ້າງຄວາມໝັ້ນໃຈໃຫ້ກັບບັນດາປະເທດຜູ້ໃຫ້ທຶນ ໂດຍສະເພາະຜູ້ໃຫ້ທຶນທາງພາກໃຕ້ ສ່ວນຫຼາຍແມ່ນປະເທດຍີ່ປຸ່ນ ເຊິ່ງເປັນປະເທດທີ່ຂຶ້ນຊື່ເລື່ອງຄວາມລະອຽດ ສະນັ້ນຄວນມີການດັດປັບເພື່ອ ໃຫ້ມີຄວາມໜ້າເຊື່ອຖື ທີ່ອາດສົ່ງຜົນໃຫ້ມີທ່າອ່ຽງຂອງການລະດົມທຶນ.

4 ບັນຫາຄວາມຍໍ້ທໍ້ຂອງພະນັກງານ ຕໍ່ກັບສະພາບການວິກິດທາງດ້ານການເງິນ ແລະ ເງິນເດືອນຜູ້ມີປະສົບການຫຼາຍປີ ແລະ ພະນັກງານເຂົ້າໃໝ່ໄດ້ເທົ່າກັນ.

ນອກຈາກນີ້ ກໍ່ຍັງໄດ້ປະສານງານ ແລະ ເຮັດວຽກຮ່ວມກັບທ່ານຮອງຫົວໜ້າຫ້ອງວ່າການແຂວງເຊກອງ ເຊິ່ງໃນນີ້ ໄດ້ປຶກສາຫາລືເຖິງເລື່ອງການຈັດແຜນບູລິມະສິດ, ການໂຄສະນາພິນຮ້າຍຂອງ ລບຕ ແລະ ໄດ້ລົງຕິດຕາມວຽກຮ່ວມກັບທີ່ເມືອງດາກຈຶງແຂວງເຊກອງ.

ສໍາລັບແຂວງອັດຕະປືແມ່ນໄດ້ເຂົ້າພົບ ແລະ ປຶກສາຫາລືກັບ ທ່ານຫົວໜ້າໂຄງການ ເກັບກູ້ລະເບີດແຫ່ງຊາດ ແຂວງອັດຕະປື ແລະ ໄດ້ຄໍາຕອບວ່າ: ແຂວງນີ້ບໍ່ໄດ້ມີບັນຫາຫຍັງ ນອກຈາກນີ້ກໍ່ໄດ້ພົບກັບຜູ້ຮັບຜິດຊອບຢູ່ຫ້ອງການປະສານງານ ຄຊກລ ແຂວງ ເຊິ່ງປະຈຸບັນເພິ່ນຍັງລໍຖ້າເອກະສານຂໍ້ຕົກລົງ ຂອງປະທານ ຄຊກລ ກ່ຽວກັບການແບ່ງວຽກພາຍໃນຄະນະ ຄຊກລ ແລະ ພາລະບົດບາດຂອງຫ້ອງການ ຄຊກລ ເພື່ອເປັນບ່ອນອີງໃນການຮ່າງຂໍ້ຕົກລົງ ຂອງທ່ານຮອງເຈົ້າແຂວງ ຜູ້ຊີ້ນໍາວຽກງານວັດທະນາທໍາ-ສັງຄົມ, ປະທານ ຄຊກລ ແຂວງ.

| | |
|---|---|
| ຫົວໜ້າຫ້ອງການ | ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ |
| ຫ້ອງການ ຄຊກລ | |
| ບຸນພະມິດ ໂສມວິຈິດ | ສະ: ພອນ |
| Mr.Bounphamith SOMVICHITH | |